ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມຂົວ ທາງ

ເລກທີ 15715 ຍທຂ.ກຂທ
ນະຄອນຫຼວງວຽງຈັນ, ວັນທີ 27.07.2017

# ປະກາດການປະມູນ

ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບງົບປະມານ ໂດຍຜ່ານກອງທຶນທາງ ເພື່ອນໍາໃຊ້ເຂົ້າໃນວຽກງານບູລະນະຮັກສາທາງຫຼວງ, ໂຄງການຂະແໜງຂົວ ທາງລາວ( Lao Road Sector Project ) ແລະ ມີຈຸດປະສົງນໍາໃຊ້ທຶນດັ່ງກ່າວ ເພື່ອຊໍາລະສາສາງມູນຄ່າຕາມສັນຍາໃນວຽກບູລະນູຮັກສາ ແລະ ຟື້ນຟູ ທາງຫຼວງແຂວງ ສົກປີ 2017 (LRSP-1617-PM6 - PR.).

ກົມຂົວ ທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ມີຄວາມຍິນດີ ຂໍເຊີນ ລັດວິສາຫະກິດ ແລະ ບໍລິສັດກໍ່ສ້າງຂົວ ທາງ ທີ່ມີຄວາມສາມາດ ແລະໃບດໍາເນີນທຸລະກິດກໍ່ສ້າງຂົວ ທາງໃນສົກປີງົບປະມານ ເຂົ້າຮ່ວມປະມູນວຽກບູລະນະຮັກສາທາງຫຼວງແບບເປັນກໍານົດ. ລາຍລະອຽດ ແລະ ຈໍານວນໂຄງການມີດັ່ງນີ້ :

| ລ/ດ | ເລກທີສັນຍາ | ທາງ ເລກທີ | ລວງຍາວທາງ (km) | ແຂວງ | ຕອນທາງ | ໜ້າວຽກ |
|---|---|---|---|---|---|---|
| 14 | SLV01-1617-PM6-PR14 | 6904 | 8,50 | ສາລະວັນ | ບ້ານ ໂຄກສະອາດ - ບ້ານ ຄັນທຸງໄຊ | ປູແຮ່ໜ້າທາງຄືນໃໝ່ |

- ທ່ານສາມາດ ຊື້ເອກະສານປະມູນນໍາຫ້ອງການ ພະແນກ ຍ ທ ຂ ຂອງແຂວງກ່ຽວຂ້ອງ **ນັບແຕ່ວັນທີ 21 ກໍລະກົດ 2017** ເປັນຕົ້ນໄປ ໃນລາຄາ 500,000ກີບ( ຫ້າແສນ ) / ຕໍ່ຊຸດ ( ບໍ່ສົ່ງຄືນ ).
- **ເອກະສານປະມູນມີອາຍຸ 90 ວັນ** ຫຼັງຈາກເປີດຊອງປະມູນ, ຕ້ອງມີໃບຄໍ້າປະກັນການປະມູນຈາກທະນາຄານ( 90+28 ວັນ) ຕາມຈໍານວນທີ່ລະບຸໄວ້ ໃນເອກະສານຢ່າງຄົບຖ້ວນ.
- ການລົງສະໜາມຈະຖືກຈັດຂຶ້ນໂດຍພະແນກ ຍ ທ ຂ ປະຈໍາແຂວງກ່ຽວຂ້ອງ, **ວັນພະຫັດ ວັນທີ 10 ສິງຫາ** 2017(ແຜນລະອຽດໃຫ້ຕິດຕໍ່ພະແນກ ຍທຂ ປະແຂວງກ່ຽວຂ້ອງ, (020) 29800 189 ຫຼື (020) 22289 299 )).
- ກອງປະຊຸມກະກຽມກ່ອນການປະມູນ ຈະຈັດຂຶ້ນ ໃນເວລາ 9:00ໂມງເຊົ້າຂອງ**ວັນສຸກ ວັນທີ 11 ສິງຫາ 2017** ທີ່ຫ້ອງປະຊຸມປະຈໍາພະແນກ ຍທຂ ກ່ຽວຂ້ອງ.
- ຊອງປະມູນ ແລະ ພ້ອມເອກະສານຢັ້ງຢືນອື່ນໆ(Qualification Information) ຕ້ອງສົ່ງເຖິງພະແນກ ຍທຂ ທີ່ກ່ຽວຂ້ອງ(ຄະນະກໍາມະການປະມູນ) ທີ່ຫ້ອງປະຊຸມໃນເວລາ 9:00ໂມງເຊົ້າຂອງ**ວັນສຸກ ວັນທີ 18 ສິງຫາ 2017**. ທຸກໆຊອງປະມູນ ຈະຖືກເປີດຊ່ອງໜ້າຄະນະກໍາມະການປະມູນ ແລະ ບັນດາບໍລິສັດເຂົ້າຮ່ວມ ປະມູນ.

ຫົວໜ້າກົມ

ແພງ ດວງເງິນ